**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ເລກທີ 1441 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 17 ກໍລະກົດ 2025

# ແຈ້ງການ

**ເຖິງ**: - ທ່ານ ຫົວໜ້າຫ້ອງການ, ກົມ, ສະຖາບັນ, ສຳນັກພິມສຶກສາ ແລະ ກິລາ ແລະ ສູນ ພາຍໃນ ສຳນັກກະຊວງສຶກສາທິການ ແລະ ກິລາ;

- ທ່ານ ອະທິການບໍດີມະຫາວິທະຍາໄລ;
- ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ;
- ທ່ານ ຜູ້ອຳນວຍການ ສະຖາບັນ, ວິທະຍາໄລ ແລະ ໂຮງຮຽນ ທັງພາກລັດ ແລະ ເອກະຊົນ ທີ່ຢູ່ສູນກາງ ແລະ ທ້ອງຖິ່ນ..

**ເລື່ອງ:** ການແຂ່ງຂັນອອກແບບ ກາໝາຍ (ໂລໂກ້) ຂອງກະຊວງສຶກສາທິການ ແລະ ກິລາ.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າກາໝາຍ (ໂລໂກ້) ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 3701/ສສກ, ລົງວັນທີ 10 ກໍລະກົດ 2025;
- ອີງຕາມ ການຄົ້ນຄວ້າ ຂອງ ກົມຈັດຕັ້ງ ແລະ ພະນັກງານ, ກະຊວງສຶກສາທິການ ແລະ ກິລາ.

ເພື່ອເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ທິດຊີ້ນຳ ຂອງກົມການເມືອງສູນກາງພັກ ແລະ ມະຕິກອງປະຊຸມຄະນະປະຈຳພັກ ກະຊວງສຶກສາທິການ ແລະ ກິລາ ຄັ້ງວັນທີ 26 ມິຖຸນາ 2025 ກ່ຽວກັບການຄົ້ນຄວ້າ ແລະ ປັບປຸງກາໝາຍ(ໂລໂກ້) ຂອງກະຊວງສຶກສາທິການ ແລະ ກິລາ ຄືນໃໝ່ ຊຶ່ງຜ່ານການນຳໃຊ້ກາໝາຍ (ໂລໂກ້) ຂອງກະຊວງສຶກສາທິການ ແລະ ກິລາ ມາຮອດປັດຈຸບັນ ເຫັນວ່າຍັງບໍ່ທັນມີເນື້ອໃນຄວາມໝາຍສອດຄ່ອງ ແລະ ຄົບຖ້ວນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ ຄື: ລັກສະນະຊາດ, ການສຶກສາ, ການຄົ້ນຄວ້າວິທະຍາສາດ ແລະ ການກິລາ. ຍ້ອນເຫດຜົນດັ່ງກ່າວ, ກົມການເມືອງສູນກາງພັກ, ລັດຖະບານ ເຫັນວ່າ ມີຄວາມຈຳເປັນ ຕ້ອງໄດ້ປັບປຸງ. ສະນັ້ນ, ຄະນະພັກ, ຄະນະນຳກະຊວງສຶກສາທິການ ແລະ ກິລາ ຈຶ່ງຕົກລົງເປັນເອກະພາບສູງ ອອກແຈ້ງການ ດັ່ງນີ້:

1. ໃຫ້ບັນດາຫ້ອງການ, ກົມ, ມະຫາວິທະຍາໄລ 4 ແຫ່ງ, ສະຖາບັນ, ວິທະຍາໄລ, ສູນ ແລະ ໂຮງຮຽນອານຸບານສຶກສາ ທັງພາກລັດ ແລະ ເອກະຊົນ, ພະແນກສຶກສາທິການ ແລະ ກິລານະຄອນຫລວງວຽງຈັນ/ແຂວງ ຈັດການແຂ່ງຂັນອອກແບບ ກາໝາຍ(ໂລໂກ້) ຂອງກະຊວງສຶກສາທິການ ແລະ ກິລາ ພາຍໃນພາກສ່ວນຕົນ;

2. ການກຳນົດ ຮູບແບບ, ເນື້ອໃນ ແລະ ຄວາມໝາຍ ຂອງ ກາໝາຍ (ໂລໂກ້) ຂອງກະຊວງສຶກສາທິການ ແລະ ກິລາ ໃໝ່ ຕ້ອງຮັບປະກັນລັກສະນະຊາດ ແລະ ສອດຄ່ອງກັບ ພາລະບົດບາດ, ໜ້າທີ່ ຂອງກະຊວງ ຊຶ່ງສະແດງອອກຢ່າງກວມລວມເຖິງ ວຽກງານ ການສຶກສາ, ການຄົ້ນຄວ້າວິທະຍາສາດ ແລະ ການກິລາ;

3. ພາຍຫລັງແຕ່ລະພາກສ່ວນ ຄົ້ນຄວ້າ ແລະ ປຶກສາຫາລື ພາຍໃນກົມກອງຂອງຕົນ ພ້ອມທັງ ອະທິບາຍຄວາມໝາຍລະອຽດແລ້ວ ໃຫ້ສົ່ງມາຍັງ ກົມຈັດຕັ້ງ ແລະ ພະນັກງານ, ກະຊວງສຶກສາທິການ ແລະ ກິລາ ກ່ອນວັນທີ 07 ສິງຫາ 2025;

4. ສຳລັບ ການແຂ່ງຂັນອອກແບບ ກາໝາຍ (ໂລໂກ້) ຂອງກະຊວງສຶກສາທິການ ແລະ ກິລາ ພາກສ່ວນໃດຊະນະ ຈະໄດ້ ການຍ້ອງຍໍ, ລາງວັນ ແລະ ຈາລຶກໄວໃນປະຫວັດສາດ ຂອງກະຊວງສຶກສາທິການ ແລະ ກິລາ ພ້ອມທັງຈັດພິທີມອບຮັບຢ່າງສົມກຽດ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງບັນດາທ່ານ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

- **ເບີຕິດຕໍ່ພົວພັນ:**
  1. ອຈ ກິບພາວັນ ດວງບຸດດີ 020 5552 2931;
  2. ອຈ ບົວວັນ ຈັນທະນິງເດດ 020 9800 2718.

**ເຊັນແທນລັດຖະມົນຕີ**
**ຮອງລັດຖະມົນຕີ**

ປອ. ສຳລານ ພັນຄະວົງ

**ບ່ອນນາສົ່ງ:**

1. ບັນດາຫ້ອງການ, ກົມ, ອົງການທຽບເທົ່າກົມ ພາກສ່ວນລະ 1 ສະບັບ;
2. ມະຫາວິທະຍາໄລ, ວິທະຍາໄລ ແລະ ສູນ ພາກສ່ວນລະ 1 ສະບັບ
3. ບັນດາແຂວງ, ນະຄອນຫຼວງ ພາກສ່ວນລະ 1 ສະບັບ;
4. ເກັບມ້ຽນ ຈຳນວນ 2 ສະບັບ.

## ກ. ກາໝາຍສຶກສາ

ປັນຍາສຶກສາ
ຄຸນສົມບັດສຶກສາ
ແຮງງານສຶກສາ

ພະລະສຶກສາ
ສິລະປະສຶກສາ

ສຶກສາ - ກິລາ

22 ຊມ

ສຶກສາທິການ

14 ຊມ

**ຄວາມເປັນມາ:** ກາໝາຍສຶກສາໄດ້ຖືກຮັບຮອງເອົາຕາມຂໍ້ຕົກລົງສະບັບເລກທີ່໑໘/ສສ-ຈຕ/ຜກ ລົງວັນທີ ໖ ມັງກອນ ໑໙໙໗, ພາຍຫຼັງໂຮມກະຊວງສຶກສາທິການ ແລະ ຄະນະກຳມະການກິລາແຫ່ງຊາດໃນປີ ໒໐໑໑ ເຂົ້າເປັນການຈັດຕັ້ງອັນດຽວກັນ ໂດຍເອີ້ນຊື່ວ່າ ກະຊວງສຶກສາທິການ ແລະ ກິລາ

ສ່ວນກາໝາຍສຶກສາ ກໍໄດ້ປ່ຽນຈາກປຶ້ມຂຽນມາເປັນປຶ້ມຕໍາລາໂດຍຂຽນວ່າ **ປັນຍາສຶກສາ, ຄຸນສົມບັດສຶກສາ, ແຮງງານສຶກສາ, ພະລະສຶກສາ ແລະ ສິລະປະສຶກສາ**; ຕົວໜັງສືທີ່ຂຽນໄວ້ຢູ່ແທ່ນທີ່ຕັ້ງຂອງຮູບໃບເສມາທີ່ຂຽນວ່າ **ສຶກສາທິການ** ເປັນ **ສຶກສາ-ກິລາ** ແລະ ປ່ຽນຈາກ**ສີເຫຼືອງແກ່ທີ່ມີລັກສະນະຄືສີຄໍາ** ມາເປັນ **ສີເຫຼືອງອ່ອນ**.

**ລັກສະນະຂອງກາໝາຍສຶກສາ** ຕາມຂໍ້ສະບັບເລກທີ໑໘/ສສ-ຈຕ/໙໗ ລົງວັນທີ ໖ ມັງກອນ ໑໙໙໗ ມີຮູບຊົງຄ້າຍຄືໃບເສມາຂອງກໍາແພງ ແລະ ກົມມະລຽນວັດ ໂດຍແບ່ງເປັນ ໒ ທ່ອນຫຼື ໒ ສ່ວນ ຄື ທ່ອນເທິງຫຼືສ່ວນເບື້ອງເທິງ ແລະ ທ່ອນລຸ່ມຫຼືສ່ວນເບື້ອງລຸ່ມ. ທັງ ໒ ທ່ອນໄດ້ເຊື່ອມເຂົ້າກັນດ້ວຍປຶ້ມຂຽນໃນເມື່ອກ່ອນ ແລະ ປຶ້ມຕໍາລາໃນປັດຈຸບັນ ແລະ ກ້ຽວກອດດ້ວຍທິວ ແລະ ຫາງນາກທີ່ມີສີລະປະເປັນລາຍເສັ້ນສີດໍາ. ສັງລວມແລ້ວ ສີຂອງກາໝາຍສຶກສາປະດ້ວຍສີ ເຫຼືອງແກ່, ສີຂາວ, ສີດໍາ ແລະ ສີແດງ.

**ຄວາມໝາຍຂອງກາໝາຍ** ໃຈກາງຂອງກາໝາຍມີລໍາທຽນສີແດງໜຶ່ງເຫຼັ້ມ ກໍາລັງເຜົາໄໝ້ຕົນເອງດ້ວຍແປວໄຟສີແດງຊຶ່ງໝາຍເຖິງແປວໄຟແຫ່ງການປະຕິວັດ, ລໍາທຽນສີແດງໝາຍເຖິງຄັນທຸງແຫ່ງການປະຕິວັດ, ເປົ່ງລັດສະໝີເປັນສີຄໍາ ຫຼື ສີເຫຼືອງແກ່ກະຈາຍອອກທັງມີເບື້ອງຄື ເບື້ອງວາມີ ໘ ແສງຊຶ່ງໝາຍເຖິງ **ສາມລັກສະນະ ແລະ ຫ້າຫຼັກມູນຂອງການສຶກສາ**, ເບື້ອງຊ້າຍມີ ໘ ແສງ ຊຶ່ງໝາຍເຖິງ **ແປດວິທີສິດສອນ** ແລະ ອີກຄວາມໝາຍໜຶ່ງຄື ເບື້ອງຊ້າຍ ແລະ ເບື້ອງຂວາມີເບື້ອງລະ ໘ ແສງ ແລະ ເບື້ອງເທິງມີ ໑ ແສງລວມເປັນ ໑໗ ແສງ ຊຶ່ງໝາຍເຖິງການສຶກສາຂະຫຍາຍຕົວໄປທົ່ວທຸກໆແຂວງ ແລະນະຄອນຫຼວງ, ເບື້ອງເທິງມີ ໑ ແສງນອກຈາກໝາຍເຖິງນະຄອນຫຼວງແລ້ວ ຍັງໝາຍເຖິງການສຶກສາມີຄວາມເປັນເອກະພາບເປັນໜຶ່ງດຽວ, ລໍາທຽນພ້ອມດ້ວຍແສງສະຫວ່າງສ່ອງເຍືອງໃສ່ປຶ້ມຂຽນທີ່ມີໃບເຈ້ຍສີຂາວ ຊຶ່ງມີຄວາມໝາຍວ່າ ລໍາທຽນເຜົາໄໝ້ຕົນເອງປຽບເໝືອນຜູ່ສອນທີ່ໄດ້ອຸທິດຊີວິດແລະສະຕິປັນຍາຢ່າງບໍ່ຮູ້ອິດເມື່ອຍເພື່ອຜູ່ບໍ່ຮູ້ໃຫ້ກາຍເປັນຜູ່ຮູ້,ໃບເຈ້ຍຂາວຊຶ່ງໝາຍເຖິງຜູ່ຮຽນທີ່ຍັງຂາວບໍລິສຸດຖ້າຜູ່ສອນ ຫາກແຕ້ມສີໃດໃສ່ກໍກາຍເປັນສີນັ້ນ, ປຶ້ມຂຽນຫຼືປຶ້ມຕໍາລາເປີດແພ່ອອກເປັນ ໒ ໜ້າຊຶ່ງໝາຍເຖິງການສອນແລະການຮຽນ ຄື ຄູ ແລະ ຜູ່ຮຽນ, ແກນກາງຂອງປຶ້ມທີ່ດຶງໜ້າທັງສອງໄວ້ປຽບເໝືອນການສອນ-ການຮຽນໂດຍເອົາຜູ່ຮຽນເປັນໃຈກາງ, ອ້ອມຮອບແສງລັດສະໝີເປັນຮູບລາຍເສັ້ນສອງຊ້ອນ ແລະ ໂອບລ້ອມໄປດ້ວຍຮູບລາຍຂໍເບື້ອງລະ ໖ ດວງຊຶ່ງໝາຍເຖິງ ໖ ຫຼັກການຂອງການສຶກສາຊຶ່ງໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສຶກສາ, ຍອດຂອງໃບເສມາເປັນຮູບດອກບົວຈູມຊຶ່ງໝາຍເຖິງຄວາມບໍລິສຸດທີ່ພ້ອມຈະຮັບເອົາແສງສະຫວ່າງແຫ່ງດວງປັນຍາຢູ່ຕະຫຼອດເວລາ.

ທ່ອນຫຼືສ່ວນຫຼືແທ່ນລຸ່ມເປັນແທ່ນທີ່ຕັ້ງຂອງໃບເສມາທີ່ມີສີແດງຊຶ່ງໝາຍເຖິງເລືອດແລະຊີວິດຂອງນັກຕໍ່ສູ້ທີ່ຕໍ່ສູ້ກັບສັດຕູໂຕໂງ່ຈ້າຫຼ້າຫຼັງຄືອະວິຊານັ້ນເອງ,ເບື້ອງເທິງແລະເບື້ອງລຸ່ມຂອງແທ່ນມີສອງຊັ້ນແລະຂັ້ນດ້ວຍພື້ນສີແດງຊຶ່ງຂຽນດ້ວຍຕົວໜັງສືສີຂາວວ່າ **ສຶກສາທິການ**ໃນເມື່ອກ່ອນ ແລະ **ສຶກສາ-ກິລາ** ໃນປັດຈຸບັນ ຊຶ່ງໝາຍເຖິງອົງການຈັດຕັ້ງບໍລິຫານ ແລະ ຄຸ້ມຄອງການສຶກສາໃຫ້ກ້າວໄປຕາມແສງສະຫວ່າງ ໓ ລັກສະນະ ແລະ ໕ ຫຼັກມູນຂອງການສຶກສາ ແລະ ເພື່ອບັນຊາການໃນການດັບສູນສັດຕູອະວິຊາໂຕໂງ່ຈ້າຫຼ້າຫຼັງໃຫ້ເມັດສິ້ນໄປຈາກດິນແດນແຫ່ງການປະຕິວັດ, ຂອບແທ່ນທີ່ຕັ້ງຂອງຮູບໃບເສມາທັງເບື້ອງເທິງ ແລະ ເບື້ອງລຸ່ມເປັນລາຍເສັ້ນສີດໍາ.

ຂະໜາດຂອງກາໝາຍ ຈະໃຫຍ່ຫຼືນ້ອຍແມ່ນຂຶ້ນກັບການຈັດວາງໃນແຕ່ລະສະຖານະການ ແຕ່ລວງສູງຫຼືລວງຕັ້ງຕ້ອງໄດ້ໜຶ່ງສ່ວນເຄິ່ງຂອງລວງນອນຫຼືລວງນອນໜຶ່ງສ່ວນ ລວງສູງຫຼືລວງຕັ້ງຕ້ອງໄດ້ໜຶ່ງສ່ວນເຄິ່ງ, ໜຶ່ງສ່ວນຂອງລວງສູງແມ່ນຮອດແປວໄຟສີແດງຂອງລຳທຽນແລະຈາກນັ້ນໄປແມ່ນໃຫ້ໄດ້ເຄິ່ງໜຶ່ງ ຈຶ່ງຈະເຮັດໃຫ້ຮູບກາໝາຍໄດ້ສັດສ່ວນ ແລະ ຈົບງາມ.

ສີຂອງກາໝາຍສຶກສາ ຕາມຂໍ້ຕົກລົງສະບັບເລກທີ່໑໘/ສສ-ຈຕ/໙໗ ລົງວັນທີ ໖ ມັງກອນ ໑໙໙໗ ນັ້ນ ແມ່ນເປັນສີເຫຼືອງແກ່ ໂດຍສະເພາະແສງໄຟທີ່ພຸ່ງອອກຈາກລຳທຽນ ກໍຄວນເປັນສີເຫຼືອງເຂັ້ມຊື່ງຄ້າຍໆຄືສີຄຳ ຊຶ່ງໝາຍມີຄວາມໝາຍວ່າ ການສຶກສາ ມີຄຸນຄ່າສູງສຸດ ສຳລັບປະຊາຊົນລາວບັນດາເຜົ່າ, ອີກດ້ານໜຶ່ງມັນກໍສອດຄ່ອງກັບສີຂອງກາໝາຍຊາດ ໂດຍສະເພາະຮູບຮວງເຂົ້າ ແລະ ຮູບທາດຫຼວງ ສ່ວນສີຂອງກາໝາຍສຶກສາທີ່ຂຽນວ່າ ສຶກສາ-ກິລາ ນັ້ນແມ່ນເປັນສີເຫຼືອງອ່ອນ ກໍຍັງບໍ່ທັນມີຜູ້ໃດໃຫ້ຄຳອະທິບາຍຢ່າງຊັດເຈນເທື່ອ ໂດຍທົ່ວໆໄປແລ້ວ ແສງໄຟທີ່ພຸ່ງອອກຫຼືເກີດຈາກເຜົາໄໝ້ອັນໃດກໍຕາມກໍມີລັກສະນະສີແດງອ່ອນໆ ແຕ່ບໍ່ແມ່ນສີແດງຄືສີເລືອດ ຂ້າພະເຈົ້າບໍ່ຮູ້ຈະພັນລະນາແນວຈຶ່ງຈະຖືກ ແຕ່ໃຫ້ເຂົ້າໃຈວ່າແມ່ນສີຂອງໄຟ ຫຼື ແສງໄຟທີ່ພຸ່ງອອກຈາກລຳທຽນນັ້ນແຫຼະ.